ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງກະສິກຳ ແລະ ປ່າໄມ້**

**ໂຄງການພັດທະນາຊົນນະບົດຮອບດ້ານ ຮ່ວມມື ລາວ-ຝຣັ່ງເສດ (PCADR)**

ຈຸດປະຕິບັດງານ ເຂດພູພຽງບໍລະເວນ (PAB)

---

# ກ້າວເຂົ້າສູ່ການປັບປຸງການເຄື່ອນໄຫວວຽກງານ ໃນຂະແໜງກາເຟລາວ
# ການສ້າງຕັ້ງຄະນະຄົ້ນຄ້ວາ ກ່ຽວກັບ ກາເຟ ເພື່ອສ້າງຕັ້ງ ສະພາທີ່ປຶກສາກາເຟລາວ

## ບັນທຶກກອບການປະຕິບັດງານ

---

ຕຸລາ 2006

PCADR PAB

AGENCE FRANÇAISE DE DÉVELOPPEMENT

# **1.** ບໍລິບົດ ແລະ ເນື້ອໃນປະກອບ

ຂະແໜງກາເຟຂອງປະເທດລາວ ແມ່ນມີການພັດທະນາຢ່າງຕໍ່ເນື່ອງ ຍ້ອນວ່າມີຜູ້ປະກອບການຈຳນວນນຶ່ງປະສົບຄວາມສຳເລັດໃນການສ້າງພາບພົດທີ່ດີໃຫ້ແກ່ກາເຟລາວທີ່ມີຄຸນນະພາບ.
ເປັນໄລຍະເວລາ 15 ປີມາແລ້ວ, ໄດ້ມີໂຄງການກາເຟທຳອິດ (ໂຄງການ LUAPD) ທີ່ໄດ້ເຂົ້າມາເຄື່ອນໄຫວກິດຈະກຳຕ່າງໆໃນແຂວງຈຳປາສັກ,

- ຜົນຜະລິດກາເຟທັງໝົດແມ່ນເພີ້ມຂຶ້ນຫລາຍກ່ວາ 2 ເທົ່າ
- ສ່ວນແບ່ງຂອງກາເຟ arabica ແມ່ນໄດ້ຮັບຄວາມຊື່ຖືເພີ້ມຂຶ້ນເປັນລຳດັບ
- ການປູກກາເຟ arabica ທີ່ປະຕິບັດຕາມແບບຢ່າງດ້ານເຕັກທີ່ສອດຄ່ອງ ແມ່ນໄດ້ຖືກນຳມາປະຕິບັດ ແລະ ເຜີຍແຜ່ໃນວົງກວ້າງ
- ສຸດທ້າຍ, ການແປຮູບກາເຟ arabica ທາງປຽກແມ່ນໄດ້ຖືກປະຍຸກນຳມາໃຊ້
- ເຄື່ອງໝາຍກາເຟ arabica ທີ່ມີເກຣດສູງແມ່ນປາກົດອອກມາໃຫ້ເຫັນໃນຕະຫລາດພາຍໃນປະເທດ ແລະ ຕະຫລາດສົ່ງອອກ
- ກາເຟລະລາຍລາວແມ່ນຖືກນຳອອກມາຈຳໜ່າຍວາງຂາຍ
- ໜ່ວຍງານຂອງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ສະເໜີແນວພັນຄຸນນະພາບ ແລະ ຄຳປຶກສາຈາກຊ່ຽວຊານດ້ານຊີນລົດຊາດກາເຟ
- ໄດ້ມີການຈັດທຳຄູ່ມືກ່ຽວກັບການປູກກາເຟ arabica
- ແລະ ອື່ນໆ

ນັບແຕ່ນີ້ຕໍ່ໄປ, ການປັບປຸງທີ່ມີຄວາມໝາຍຄວາມສຳຄັນນີ້ ແມ່ນຕ້ອງໄດ້ຮັບການຊີ້ນຳ ແລະ ປະສານງານໂດຍຜູ້ປະກອບການທີ່ກ່ຽວຂ້ອງໃນຂະແໜງທຸກລາຍ ທັງນີ້ກໍ່ເພື່ອຮັບປະກັນຄວາມໝັ້ນຄົງຖາວອນຂອງຂະແໜງການດັ່ງກ່າວ. ອັນທີ່ຈິງແລ້ວ, ບໍ່ປະກົດວ່າມີເວທີໃນການສະແດງຄວາມຄິດເຫັນ ວິໄສທັດສຳລັບຜູ້ປະກອບການທີ່ກ່ຽວຂ້ອງ ຊຶ່ງເປັນຜູ້ຮັບຜິດຊອບຍຸດທະສາດການພັດທະນາຂະແໜງກາເຟ ສຳລັບໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ.

ນອກຈາກນີ້, ເຖິງວ່າຈະມີການພັດທະນາທີ່ໜ້າປະຫລາດໃຈເຊັ່ນນີ້ກໍ່ຕາມ, ຖ້າຫາກປຽບທຽບຂະແໜງກາເຟແຫ່ງຊາດ ກັບປະເທດຜູ້ຜະລິດກາເຟອື່ນໆ, ເຫັນວ່າຍັງຄົງມີອີກຫລາຍສິ່ງຫລາຍຢ່າງທີ່ຈະຕ້ອງໄດ້ຮັບການປັບປຸງແກ້ໄຂ ເຊັ່ນດັ່ງຕົວຢ່າງຕໍ່ໄປນີ້ :

- ຫລຸດຜ່ອນຄວາມຄິດເຫັນທີ່ແຕກຕ່າງດ້ານລົບທີ່ສົ່ງຜົນສະທ້ອນຕໍ່ການສົ່ງອອກກາເຟ robusta
- ຈັດຕັ້ງປະຕິບັດກົດລະບຽບ ແລະ ມາດຕະຖານແຫ່ງຊາດ ສຳລັບກາເຟຂົ້ວ ແລະ ກາເຟສົ່ງອອກ
- ປັບປຸງເງື່ອນໄຂໃນການສົ່ງອອກໂດຍຜ່ານທາງປະເທດໄທ
- ສ້າງເຄື່ອງໝາຍສັນຍາລັກແຫ່ງຄຸນນະພາບ ຊຶ່ງຄຸ້ມຄອງເບິ່ງແຍງໂດຍປະເທດລາວເອງ
- ຈັດຕັ້ງປະຕິບັດຄ່າຕອບແທນໂດຍອີງໃສ່ຄຸນນະພາບຂອງກາເຟເປັນມາດຖານໃນການຕັດສິນລາຄາກາເຟ
- ປັບປຸງການສົ່ງອອກກາເຟ robusta ໂດຍລວມ, ປະເທດລາວແມ່ນເປັນປະເທດດຽວໃນໂລກທີ່ປູກກາເຟ, *Coffea canephora* (robusta) ໃນເຂດພື້ນທີ່ພູສູງ
- ສ້າງໜ່ວຍງານໃນການຄົ້ນຄ້ວາວິໃຈ ແລະ ພັດທະນາກາເຟ, ຄຸນນະພາບກາເຟ
- ປັບປຸງການປູກກາເຟ robusta
- ຈັດຕັ້ງປະຕິບັດຍຸດທະສາດໃນການຕໍ່ຕ້ານມອດ
- ປັບປຸງການມີສ່ວນຮ່ວມຂອງຊາວກະສິກອນຜູ້ຜະລິດ ໃນການພັດທະນາຂະແໜງກາເຟ
- ແລະ ອື່ນໆ

ສຸດທ້າຍ, ໂຄງການພັດທະນາການປູກກາເຟແມ່ນມີຫລາຍໂຄງການ ແລະ ໄດ້ຮັບຄວາມສົນໃຈຢ່າງສູງຈາກຜູ້ໃຫ້ທຶນຫລາຍລາຍ, ທັງພາກລັດ ແລະ ພາກເອກະຊົນ ຕະຫລອດໄລຍະ 15 ປີທີ່ຜ່ານມາບໍ່ວ່າຈະເປັນ : ທະນາຄານໂລກ, ອົງການຮ່ວມມືຝຣັ່ງ, ອົງການຮ່ວມມືຍີ່ປຸ່ນ, FAO, ເຊັ່ນດຽວກັນກັບ ອົງການ Jhaï, Oxfam, FLO international ແລະ FLO Cert, ການລົງທຶນພາກເອກະຊົນຈາກບໍລິສັດ ດາວເຮືອງ, ບໍລິສັດກາເຟສີໝຸກ ແລະ ອື່ນໆ. ໂຄງການທັງໝົດເຫລົ່ານີ້ລ້ວນແລ້ວແຕ່ເປັນທ່າແຮງດ້ານບວກ, ແຕ່ໃນປະຈຸບັນນີ້ ຄວນຈະຕ້ອງມີການປະສານງານກັນ ແລະ ປະກອບສ່ວນເຂົ້າໃນການກຳນົດນະໂຍບາຍການພັດທະນາກາເຟທີ່ຖືກຕ້ອງເປັນຈິງ ແລະ ມີຜົນສັກສິດ, ຊຶ່ງຈັດຕັ້ງ ແລະ ນຳມາປະຕິບັດໂດຍຜູ້ປະກອບການທີ່ກ່ຽວຂ້ອງໃນຂະແໜງກາເຟທຸກລາຍ.

ໃນບັນດາປະເທດຜູ້ຜະລິດກາເຟທຸກໆປະເທດ, ປາກົດວ່າມີໜ່ວຍງານທີ່ເປັນຕົວແທນແຫ່ງຊາດ, ຈາກຫລາກຫລາຍອາຊີບ ໃນຂະແໜງກາເຟ, ທີ່ຄຸ້ນເຄີຍກັນດີແມ່ນໃນນາມ ຄະນະກຳມະການກາເຟແຫ່ງຊາດ ***Coffee Board*** ຫລື ***Consejo Nacional del Café*** ຫລືວ່າ ***Conseil National du café,*** ຊຶ່ງໂດຍພື້ນຖານແລ້ວ ແມ່ນຮັບຜິດຊອບ 3 ພາລະບົດບາດຫລັກ ອັນໄດ້ແກ່ :

1) **ໃຫ້ຄຳປຶກສາ** ແກ່ລັດຖະບານໃນການກຳນົດຍຸດທະສາດພັດທະນາການປູກກາເຟ
2) **ປະຕິບັດໜ້າທີ່ແທນ** ປະເທດຂອງຕົນເອງ ໃນຖານະຜູ້ຜະລິດກາເຟ ໃນເວທີສາກົນ (ການປະຊຸມນານາຊາດ ແລະ ພູມມີພາກ, ງານຈຳໜ່າຍສິນຄ້າ ແລະ ງານວາງສະແດງສິນຄ້າ ແລະ ອື່ນໆ) ແລະ ໃນລະດັບຊາດ (ການຢ້ຽມຢາມ, ການເປັນຜູ້ແທນໃຫ້ແກ່ປະເທດ, ງານວາງສະແດງສິນຄ້າ ແລະ ອື່ນໆ)
3) **ຄວບຄຸມກວດກາ** ກົດໝາຍແຫ່ງຊາດວ່າດ້ວຍກາເຟ

ປະເທດລາວຄວນໄດ້ຮັບປະໂຫຍດຈາກອົງກອນລັກສະນະດັ່ງກ່າວນີ້. ໂດຍພື້ນຖານແລ້ວ, ຜູ້ປະກອບການທີ່ສຳຄັນທີ່ສຸດໃນຂະແໜງການຕ້ອງມີຜູ້ຕາງໜ້າຊຶ່ງປະກອບດ້ວຍ : ຜູ້ຜະລິດ, ຜູ້ສົ່ງອອກ ແລະ ຜູ້ປຸງແຕ່ງ. ລັດເອງກໍຄວນຈະມີຜູ້ຕາງໜ້າເຂົ້າຮ່ວມເຊັ່ນກັນຢູ່ໃນລະດັບຂັ້ນແຂວງ ແລະ ຂັ້ນປະເທດ ເນື່ອງຈາກວ່ານະໂຍບາຍຂອງຂະແໜງກາເຟນີ້ ແມ່ນຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງການຄ້າ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ ແລະ ພາກສ່ວນໃຫ່ຍແມ່ນຂຶ້ນກັບແຂວງຈຳປາສັກ.

ຄະນະກຳມະການກາເຟແຫ່ງຊາດ Conseil National du Café Lao[1] » (CNCL) ທີ່ຈະຈັດຕັ້ງຂຶ້ນໃນອານາຄົດນັ້ນ, ຈະຕ້ອງເປັນຕົວແທນໃຫ້ແກ່ຂະແໜງການກາເຟ, ແຕ່ໃນຂະນະດຽວກັນ ແມ່ນຕ້ອງໄດ້ຮັບການຊຸກຍູ້ດ້ານກົດລະບຽບ ແລະ ງົບປະມານ ເພື່ອເຮັດໃຫ້ອົງກອນນີ້ສາມາດປະຕິງານໄດ້ຢ່າງມີປະສິດຕິພາບ. ອານາຄົດຂອງຂະແໜງກາເຟແມ່ນຂຶ້ນຢູ່ກັບຜົນສຳເລັດໃນການປະຕິບັດງານຂອງຄະນະກຳມະການຊຸດນີ້. ສຸດທ້າຍ, ຄະນະກຳມະການກາເຟແຫ່ງຊາດຄວນປະກອບມີສະມາຊິກຈາກຜູ້ປະກອບການທຸກລາຍທີ່ກ່ຽວຂ້ອງໃນຂະແໜງກາເຟ.

ນີ້ແມ່ນຈຸດປະສົງທີ່ຈະຕ້ອງໃຊ້ຄວາມອົດທົນພະຍາຍາມສູງ ເພື່ອເຮັດໃຫ້ບັນລຸເປົ້າໝາຍດັ່ງກ່າວນີ້ **ແມ່ນສະເໜີໃຫ້ສ້າງຕັ້ງຄະນະເຮັດວຽກຊົ່ວຄາວຂຶ້ນ ຄະນະດັ່ງກ່າວແມ່ນມີພາລະກິດໃນການຈັດທຳຂໍ້ສະເໜີຕ່າງໆທີ່ເປັນຮູບປະທຳ ໃຫ້ແກ່ລັດຖະບານເພື່ອສ້າງຕັ້ງຄະນະກຳມະການກາເຟແຫ່ງຊາດ (CNCL)**.

ຄະນະເຮັດວຽກກາເຟຊົ່ວຄາວນີ້ (GTC) ບໍ່ແມ່ນຄະນະກຳມະການກາເຟແຫ່ງຊາດ (CNCL). ໝາຍຄວາມວ່າຄະນະດັ່ງກ່າວແມ່ນຈະໄດ້ສຶກສາຄົ້ນຄ້ວາ ພຽງແຕ່ວຽກງານດຽວເທົ່ານັ້ນ ນັ້ນກໍ່ຄືການຄ້ວາກົນໄກການສ້າງຕັ້ງ ແລະ ການດຳເນີນງານຂອງຄະນະກຳມະການກາເຟແຫ່ງຊາດ (CNCL) ທີ່ຈະຈັດຕັ້ງຂຶ້ນໃນອານາຄົດ. ເມື່ອໃດທີ່ທາງຄະນະເຮັດວຽກກາເຟ (GTC) ສົ່ງມອບວຽກຄືນໃຫ້ແກ່ລັດຖະບານ ຄະນະກຳມະການດັ່ງກ່າວກໍຈະຖືກລົບລ້າງໂດຍອັດຕະໂນມັດ.

[1] ຊື່ນີ້ແມ່ນເປັນຊື່ຕົວຢ່າງ ເພາະຂຶ້ນກັບທາງຄະນະເຮັດວຽກກາເຟຈະເປັນຜູ້ສະເໜີຊື່ທີ່ເໝາະສົມໃນໂອກາດຕໍ່ໄປ.

## 2. ຮູບແບບຂອງຄະນະເຮັດວຽກ « ກາເຟ »

ຄະນະເຮັດວຽກ « ກາເຟ » (ຊຶ່ງມີຄຳຫຍໍ້ໃນເອກະສານຕໍ່ໄປວ່າ GTC) ແມ່ນຈະຖືກສ້າງຕັ້ງຂື້ນ ເພື່ອຈັດທຳຂໍ້ສະເໜີຕ່າງໆໃຫ້ແກ່ລັດຖະບານ ເພື່ອຈັດຕັ້ງຄະນະກຳມະການກາເຟແຫ່ງຊາດ (CNCL). ໄລຍະເວລາໃນການປະຕິບັດໜ້າທີ່ຈະສິ້ນສຸດລົງກັບການສົ່ງມອບຂໍ້ສະເໜີໃຫ້ແກ່ລັດຖະບານ.

### *2.1. ຈຸດປະສົງ*

ຄະນະເຮັດວຽກກາເຟ (GTC) ແມ່ນມີ 2 ຈຸດປະສົງສຳຄັນດັ່ງນີ້:

1. ຈັດທຳຂໍ້ສະເໜີຕ່າງໆ (ເຊັ່ນ: ສັນຫາຜູ້ແທນ, ຮ່າງກົດລະບຽບ, ຂອບເຂດອຳນາດ, ຂື້ນງົບປະມານ ແລະ ອື່ນໆ) ໃຫ້ແກ່ລັດຖະບານ ເພື່ອຈັດຕັ້ງຄະນະກຳມະການກາເຟແຫ່ງຊາດ « Conseil National du Café Lao»

2. ປະຕິບັດໃຫ້ສຳເລັດວຽກງານວິໃຈປັນຫາໃນຂະແໜງກາເຟແບບມີສ່ວນຮ່ວມ ທີ່ຈະໃຊ້ເປັນພື້ນຖານໃຫ້ແກ່ ຄະນະກຳມະການກາເຟແຫ່ງຊາດ (CNCL) ເພື່ອເສີມຂະຫຍາຍຍຸດທະສາດການພັດທະນາໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ.




## 2.2. *ໂຄງປະກອບສ້າງ*

ຄະນະເຮັດວຽກຊົ່ວຄາວ GTC ບໍ່ແມ່ນອົງກອນທີ່ປະຕິບັດໜ້າທີ່ແທນ ຄືກັບຄຳນິຍາມທີ່ລະບຸໄວ້ຂ້າງເທິງ. ຄະນະດັ່ງກ່າວຈະຕ້ອງປະຕິບັດໜ້າທີ່ ແລະ ຈັດທຳຂໍ້ສະເໜີຕ່າງໆທີເປັນຮູບປະທຳ ໃນຊ່ວງໄລຍະເວລາອັນສັ້ນ (ເບິ່ງຕາຕະລາງປະຕິບັດງານໃນໜ້າຕໍ່ໄປ).

ເພື່ອເຮັດໃຫ້ການປະຕິບັດງານມີຄວາມສະດວກຄ່ອງຕົວ ແລະ ມີຄວາມຕໍ່ເນື່ອງນັ້ນ, ສະເໜີໃຫ້ຈັດຕັ້ງຄະນະເຮັດວຽກກາເຟ GTC ຂະໜາດກະທັດຮັດ ຊຶ່ງແນໃສ່ 3 ພາກສ່ວນ ທີ່ເປັນພື້ນຖານໃຫ້ແກ່ຂະແໜງກາເຟລາວອັນໄດ້ແກ່ : ຊາວກະສິກອນຜູ້ຜະລິດ, ຜູ້ສົ່ງອອກ ແລະ ຜູ້ປຸງແຕ່ງ, ລັດ.

ສະນັ້ນ, ຈຶ່ງສະເໜີໃຫ້ຄະນະເຮັດວຽກ GTC ປະກອບດ້ວຍສະມາຊິກ 13 ທ່ານດັ່ງຕໍ່ໄປນີ້ :

- ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ (ຫລື ຜູ້ຕາງໜ້າຂອງທ່ານ), ເປັນປະທານຄະນະເຮັດວຽກ GTC
- ຜູ້ແທນຈາກຊາວກະສິກອນຜູ້ຜະລິດຈຳນວນ 4 ທ່ານ

- ຜູ້ແທນຈາກຜູ້ສົ່ງອອກ ແລະ ຜູ້ປຸງແຕ່ງກາເຟຈຳນວນ 4 ທ່ານ
- ຜູ້ແທນຈາກສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດຈຳນວນ 1 ທ່ານ
- ຜູ້ແທນຈາກກະຊວງການຄ້າ ແລະ ກະຊວງອຸດສາຫະກຳຈຳນວນ 1 ທ່ານ
- ຜູ້ແທນຈາກແຂວງຈຳປາສັກຈຳນວນ 1 ທ່ານ
- ຜູ້ແທນຈາກແຂວງສາລາວັນຈຳນວນ 1 ທ່ານ

ບັນດາກະຊວງ ແລະ ບັນດາແຂວງທີ່ກ່ຽວຂ້ອງ ຈະເປັນຜູ້ແຕ່ງຕັ້ງຜູ້ແທນຂອງຕົນເອງ.

ຜູ້ແທນຈາກຜູ້ສົ່ງອອກ ແລະ ຜູ້ປຸງແຕ່ງກາເຟ ແມ່ນຈະໄດ້ຮັບການແຕ່ງຕັ້ງຈາກສະມາຄົມກາເຟລາວ.

ສຳລັບຜູ້ແທນຈາກຊາວກະສິກອນຜູ້ຜະລິດຈຳນວນ 4 ທ່ານ, ທາງໂຄງການພັດທະນາ ກະສິກຳພູພຽງບໍລະເວນ (PAB) ຈະເປັນຜູ້ສະເໜີລາຍຊື່ໃຫ້ແກ່ພະແນກກະສິກຳ ແລະ ປ່າໄມ້ (PAFO) ແຂວງຈຳປາສັກ ແລະ ແຂວງສາລະວັນຕາມລຳດັບ, ຈາກນັ້ນທັງສອງແຂວງຈະເປັນຜູ້ແຕ່ງຕັ້ງຜູ້ສະໝັກທີ່ມີຄວາມສາມາດສູງສຸດ ເປັນຜູ້ຕາງໜ້າຂອງຕົນເຂົ້າມາປະຈຳການ ໃນຄະນະເຮັດວຽກ GTC.

ເລຂານຸການຂອງຄະນະເຮັດວຽກ GTC ແມ່ນຈະໄດ້ຮັບການຕອບສະໜອງໂດຍຫ້ອງການສູນກາງ (UC) ຂອງໂຄງການພັດທະນາຊົນນະບົດຮອບດ້ານຮ່ວມມືລາວ-ຝຣັ່ງເສດ (PCADR).

## 2.3. *ການດຳເນີນງານ*

ຄະນະເຮັດວຽກກາເຟ GTC ຈະຕ້ອງໄດ້ສຸມໃສ່ 2 ວຽກງານທີ່ຕົນເອງຮັບຜິດຊອບ. ຄະນະດັ່ງກາວແມ່ນຈະໄດ້ຈັດຕັ້ງຄະນະກຳມະການເຮັດວຽກຂຶ້ນມາ 2 ຊຸດ.

**ຄະນະກຳມະການຊຸດທີ** 1 ຈຳຕ້ອງຄົ້ນຄ້ວາຂໍ້ສະເໜີຕ່າງໆ ເພື່ອສ້າງຕັ້ງຄະນະກຳມະການກາເຟແຫ່ງຊາດ (CNCL). ຄະນະກຳມະການຊຸດນີ້ແມ່ນຈະໄດ້ຮັບການຊ່ວຍເຫລືອຈາກນັກກົດໝາຍໃນການຄົ້ນຄ້ວາກົດລະບຽບ.

**ຄະນະກຳມະການຊຸດທີ** 2 ຈະຕ້ອງບໍລິຫານຄຸ້ມຄອງວຽກວິໃຈປັນຫາໃນຂະແໜງກາເຟແບບມີສ່ວນຮ່ວມ. ຄະນະກຳມະການຊຸດນີ້ແມ່ນຈະໄດ້ຮັບການຊ່ວຍເຫລືອຈາກຊ່ຽວຊານດ້ານເຕັກນິກຈາກໂຄງການ (PAB) ແລະ ຫ້ອງການສູນກາງ (UC) ຂອງໂຄງການ PCADR ຊຶ່ງໄດ້ເຮັດວຽກກ່ຽວກັບເນື້ອຫາປະເດັນນີ້ມາແລ້ວ.

ຄະນະເຮັດວຽກກາເຟ GTC ຈະຕ້ອງປະຊຸມກັນເດືອນລະຄັ້ງ ໂດຍມີການກຳນົດວັນເວລາຄັກແນ່ (ຕົວຢ່າງ : ວັນອັງຄານສຸດທ້າຍຂອງແຕ່ລະເດືອນ). ວັນເວລາດັ່ງກ່າວແມ່ນຈະໄດ້ມີການກຳນົດໂດຍການລົງຄະແນນໃນວາລະການປະຊຸມຄັ້ງທຳອິດ.

ໃນເວລະການປະຊຸມແຕ່ລະຄັ້ງ, ຈະໄດ້ມີການປຶກສາຫາລື ຕິດຕາມຄວາມກ້າວໜ້າໃນປະຕິບັດງານ ຂອງຄະນະກຳມະການທັງສອງຊຸດ.

ເພື່ອເຮັດໃຫ້ມີຄວາມສະດວກຕື່ມອີກ ແລະ ເພື່ອໃຫ້ຄະນະກຳມະການທັງສອງຊຸດ ສາມາດປະຕິບັດງານໄດ້ຢ່າງຄ່ອງຕົວ ແລະຕໍ່ເນື່ອງນັ້ນ, ສະເໜີໃຫ້ທາງຄະນະເຮັດວຽກ GTC ມີຫ້ອງການບັນຊາການຢູ່ທີ່ເມືອງປາກເຊ. ກອງປະຊຸມບາງວາລະລວມເຖິງກອງປະຊຸມລະດັບຊາດວ່າດ້ວຍການນຳສະເໜີຜົນການປະຕິບັດງານ ແມ່ນສາມາດຈັດຂຶ້ນຢູ່ທີ່ນະຄອນຫລວງວຽງຈັນ. ຄະນະເຮັດວຽກ GTC ຈະໄດ້ມີການຕົກລົງກັນກ່ຽວກັບປະເດັນນີ້ ໃນວາລະການປະຊຸມແຕ່ລະຄັ້ງ.

## 3. ຈຸດປະສົງ 1 : ຂໍ້ສະເໜີໃນການສ້າງຕັ້ງ « ຄະນະກໍາມະການກາເຟແຫ່ງຊາດ »

ຄະນະກຳມະການຊຸດທີ 1 ຈະຕ້ອງຄົ້ນຄ້ວາວຽກງານຕໍ່ໄປນີ້ :

- ບົດບາດ ທີ່ແທ້ຈິງຂອງຄະນະກຳມະການກາເຟແຫ່ງຊາດ CNCL ແລະ ບັນດາຈຸດປະສົງຕ່າງໆຂອງອົງກອນ
- ໂຄງປະກອບສ້າງ ຂອງຄະນະກຳມະການກາເຟແຫ່ງຊາດ CNCL ທີ່ຈະສ້າງຕັ້ງຂື້ນໃນອານາຄົດ ໂດຍການຮ່າງຂະບວນການການເລືອກຕັ້ງ ຫລື ການແຕ່ງຕັ້ງສະມາຊິກແຕ່ລະທ່ານ
- ໄລຍະເວລາໃນການປະຕິບັດໜ້າທີ່ ຂອງສະມາຊິກ
- ການດຳເນີນງານ ຂອງຄະນະກຳມະການກາເຟແຫ່ງຊາດ CNCL (ກົດລະບຽບພາຍໃນ) ແລະ ເປັນຕົ້ນແມ່ນ ພັນທະໜ້າທີ່ຮັບຜິດຊອບ ໃນການເຂົ້າຮ່ວມກອງປະຊຸມໃນກໍລະນີທີ່ມີຄວາມຕ້ອງການ, ໂຄງປະກອບສ້າງຂອງຄະນະຜູ້ບໍລິຫານອົງກອນ (ປະທານ, ນາຍຄັງ, ເລຂາ ແລະ ອື່ນໆ)
- ຂໍ້ສະເໜີໃນ ການປະກອບທຶນ ໃຫ້ແກ່ການປະຕິບັດງານຂອງຕົນ. ໃນບັນດາປະເທດຜູ້ຜະລິດກາເຟສ່ວນໃຫ່ຍແລ້ວ, ອົງກອນດັ່ງກ່າວ ແມ່ນໄດ້ຮັບການຕອບສະໜອງດ້ານທຶນ ໂດຍການເກັບພາສີເງີນໄດ້ຈາກບໍລິມາດທີ່ສົ່ງອອກ ແລະ ທີ່ມີການຂາຍພາຍໃນປະເທດ (ຕົວຢ່າງເຊັ່ນ : ອາກອນສະແຕມສຳລັບເຫລົ້າ ແລະ ຢາສູບ).

ຄະນະກຳມະການຊຸດນີ້ຈະຕ້ອງສຸມໃສ່ໃນການຄົ້ນຄ້ວາຮ່າງເອກະສານເນື້ອໃນ ທີ່ຊ່ວຍໃຫ້ຄະນະກຳມະການກາເຟລາວ CNCL ສາມາດຮັບຜິດຊອບ 3 ບົດບາດພື້ນຖານອັນໄດ້ແກ່ : ໃຫ້ຄຳປຶກສາ, ປະຕິບັດໜ້າທີ່ແທນ ແລະ ຄວບຄຸມກວດກາ.

ໃນບາງໂອກາດ ແມ່ນຈະໄດ້ຈັດການເດີນທາງເພື່ອເກັບຂໍ້ມູນ ເພື່ອພົບປະກັບຄະນະກຳມະການກາເຟ *Coffee Board* ທີ່ມີຢູ່ໃນປະເທດໃດນື່ງພາກພື້ນອາຊີ (ເຊັ່ນ : ປະເທດອິນເດຍ). ການເດີນທາງໃນລັກສະນະນີ້ ແມ່ນຈະຊ່ວຍໃຫ້ສະມາຊິກຂອງຄະນະກຳມະການຊຸດນີ້ ສາມາດສຶກສາກໍລະນີນື່ງທີ່ເປັນຮູບປະທຳຂອງກົດລະບຽບ ແລະ ການດຳເນີນງານຂອງຜູ້ທີ່ໄດ້ຮັບການແຕ່ງຕັ້ງຈາກຫລາກຫລາຍອາຊີບ ຊື່ງຮັບຜິດຊອບຂະແໜງກາເຟ.

## 4. ຈຸດປະສົງ 2 : ວິໃຈປັນຫາໃນຂະແໜງກາເຟແບບມີສ່ວນຮ່ວມ

ຄະນະເຮັດວຽກກາເຟ GTC ຈະຕ້ອງສົ່ງມອບການວິໃຈປັນຫາໃນຂະແໜງກາເຟແຫ່ງຊາດທີ່ເປັນກາງ ແລະ ສອດຄ່ອງກັບຄວາມຕ້ອງການຂອງຄົນສ່ວນໃຫ່ຍ ໃຫ້ແກ່ຄະນະກຳມະການກາເຟແຫ່ງຊາດ CNCL ທີ່ຈະຈັດຕັ້ງຂື້ນໃນອານາຄົດ. ການວິໃຈນີ້ຈະຕ້ອງນຳໃຊ້ເປັນພື້ນຖານ ໃຫ້ແກ່ການຜັນຂະຫຍາຍຍຸດທະສາດແຫ່ງຊາດໃນການພັດທະນາຂະແໜງກາເຟລາວ ສຳລັບໄລຍະສັ້ນ, ໄລຍະກາງ ແລະ ໃນໄລຍະຍາວຕໍ່ໄປ.

ຕາມທຳນຽມປະຕິບັດແລ້ວ, ຂັ້ນຕອນຕ່າງໆດັ່ງຕໍ່ໄປນີ້ ແມ່ນຈະຕ້ອງໄດ້ຮັບການດຳເນີນການ :

a) ນຳສະເໜີຈຸດປະສົງເປົ້າໝາຍ ແລະ ວິທີການດຳເນີນງານໃຫແກ່ຜູ້ປະກອບການໃນຂະແໜງການ, ໃນກໍລະນີນີ້ແມ່ນໃຫ້ແກ່ຄະນະເຮັດວຽກ GTC.

b) ປະຕິບັດໃຫ້ສຳເລັດວຽກງານການສຶກສາຄົ້ນຄ້ວາ ດ້ວຍປະເພດຂອງຜູ້ປະກອບການກັບການເຂົ້າຮ່ວມເຮັດວຽກ ຢ່າງເຕັມກຳລັງຂອງພວກເຂົາ. ການສຶກສາຄົ້ນຄ້ວານີ້ແມ່ນຈະຕ້ອງຄຳນື່ງເຖິງມາດຕາສ່ວນລະດັບສາກົນ, ລະດັບປະເທດ ແລະ ລະດັບພູມີພາກ.

c) ນຳສະເໜີຜົນຂອງການສຶກສາຄົ້ນຄ້ວາ (ການວິໃຈ, ການແກ້ໄຂ, ສິ່ງປະກອບ) ໃຫ້ແກ່ຄະນະກຳມະການຊຸດທີ 2 ຂອງຄະນະເຮັດວຽກ GTC

d) ປະຕິບັດໃຫ້ສຳເລັດການສຶກສາວິໃຈປັນຫາ ແລະ ໂດຍສະເພາະ ແມ່ນການຄົ້ນຄ້ວາລາຍການ ປັດໃຈທີ່ເປັນຂໍ້ຈຳກັດໃຫ້ແກ່ການພັດທະນາຂະແໜງກາເຟແຫ່ງຊາດ. ສະນັ້ນ, ຄະນະເຮັດວຽກ GTC ຈະຕ້ອງໄດ້ເຄື່ອນໄຫວໃນການຈັດລຳດັບຄວາມສຳຄັນຂອງບັນດາຂໍ້ຈຳກັດຕ່າງໆເຫລົ່ານີ້ ໂດຍອີງຕາມສຽງສ່ວນໃຫ່ຍ. ຂໍ້ຈຳກັດຕ່າງໆແມ່ນຈະຖືກແບ່ງແຍກອອກໂດຍອີງໃສ່ 2 ມາດຖານດັ່ງນີ້ : ໄລຍະເວລາໃນການແກ້ໄຂ (ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ) ແລະ ແນວໂນ້ມໃນການແກ້ໄຂປັນຫາຂອງຜູ້ປະກອບການໃນຂະແໜງການ (ຕົວຢ່າງ : ໄພແຫ້ງແລ້ງແມ່ນຂໍ້ຈຳກັດທີ່ບໍ່ສາມາດປ່ຽນແປງໄດ້ ຊຶ່ງກົງກັນຂ້າມກັບ ການທີ່ບໍ່ມີກົດລະບຽບຂໍ້ບັງຄັບໃນການສົ່ງອອກ ນີ້ຖືເປັນຂໍ້ຈຳກັດທີ່ສາມາດແກ້ໄຂໄດ້ຢ່າງງ່າຍດາຍ)

e) ນຳສະເໜີຜົນການສຶກສາຄົ້ນຄ້ວາ ໃນວາລະກອງປະຊຸມລະດັບຊາດ ຊຶ່ງຈະມີຜູ້ແທນຈາກຜູ້ປະກອບການຕ່າງໆໃນຂະແໜງກາເຟເຂົ້າຮ່ວມເປັນຈຳນວນຫລວງຫລາຍ.

ພາລະໜ້າທີ່ຮັບຜິດຊອບຂອງຄະນະເຮັດວຽກກາເຟ GTC ກ່ຽວກັບຈຸດນີ້ ແມ່ນສິ້ນສຸດລົງພຽງແຕ່ເທົ່ານີ້.

ຄະນະກຳມະການກາເຟແຫ່ງຊາດ CNC ຈະສານຕໍ່ຮັບຜິດຊອບວຽກງານດັ່ງຕໍ່ໄປນີ້ :

a) ຄົ້ນຄ້ວາຮ່າງເອກະສານຕ່າງໆ ແນໃສ່ຍົກໃຫເຫັນເຖິງປັດໃຈຕ່າງໆ ທີ່ເປັນຂໍ້ຈຳກັດໃນການພັດທະນາຂະແໜງກາເຟແຫ່ງຊາດ, ໃນລະດັບເຕັກນິກວິຊາການ ແລະ ງົບປະມານ ອີງຕາມລຳດັບຄວາມສຳຄັນ ແລະ ປະເພດຂອງປັນຫາ.

b) ຄົ້ນຄ້ວາການປະກອບທຶນທີ່ຈຳເປັນໃຫ້ແກ່ການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ກັບຜູ້ປະກອບການ ແລະ ອົງກອນຕ່າງໆທີ່ກ່ຽວຂ້ອງ

c) ກວດກາເບິ່ງແຍງການປະຕິບັດໂຄງການຕ່າງໆຂອງຜູ້ທີ່ໄດ້ຮັບການແຕ່ງຕັ້ງທີ່ກ່ຽວຂ້ອງ ໃຫ້ມີຄວາມຖືກຕ້ອງສອດຄ່ອງກັບເປົ້າໝາຍທີ່ວາງໄວ້.

ເພື່ອປະຕິບັດວຽກງານວິໃຈປັນຫາໃຫ້ປະສົບຜົນສຳເລັດນັ້ນ, ແມ່ນສະເໜີໃຫ້ຈັດຕັ້ງກຸ່ມຊ່ຽວຊານດ້ານເຕັກນິກ ຊຶ່ງປະກອບດ້ວຍ :

- ສະມາຊິກຈຳນວນ 1 ທ່ານຈາກຫ້ອງການສູນກາງ (UC) ຂອງໂຄງການ (PCADR), ກຸ່ມນີ້ແມ່ນໄດ້ເຮັດວຽກຫລາຍແລ້ວໃນການວິໃຈຂະແໜງກາເຟລາວ
- ຊ່ຽວຊານດ້ານເຕັກນິກຈາກໂຄງການ PAB
- ອາຈານດ້ານເສດຖະສາດ-ກະສິກຳ ຈາກຄະນະກະເສດສາດນາບົງ, ມະຫາວິທະຍາໄລແຫ່ງຊາດ ຈຳນວນ 1 ທ່ານ, ຊຶ່ງອາຈານດັ່ງກ່າວແມ່ນໄດ້ຕິດຕາມການຝຶກອົບຮົມກ່ຽວກັບການວິໃຈຂະແໜງການໃນປີ 2005 ທີ່ຜ່ານມານີ້
- ຊ່ຽວຊານດ້ານການວິໃຈຂະແໜງການຈຳນວນ 1 ທ່ານ, ເປັນຕົ້ນແມ່ນຜູ້ທີ່ໄດ້ທຳການຝຶກອົບຮົມໃຫ້ແກ່ບັນດາອາຈານຈາກຄະນະກະເສດນາບົງ, ມະຫາວິທະຍາໄລແຫ່ງຊາດໃນປີ 2005 ທີ່ຜ່ານມານີ້. ຊ່ຽວຊານຄົນດັ່ງກ່າວແມ່ນຈະໄດ້ເຂົ້າມາສົມທົບເຮັດວຽກ ສຳລັບ 2 ຊ່ວງເວລາໄລຍະສັ້ນ ນັ້ນແມ່ນໃນໄລຍະຕົ້ນຂອງການປະຕິບັດງານ ແລະ ໃນໄລຍະການນຳສະເໜີບົດລາຍງານເຄິ່ງທາງຂອງການດຳເນີນງານ, ຊຶ່ງເປັນຊ່ວງເວລາໃນການຕັດສິນການສຶກສາປະກອບ.

ກຸ່ມຊ່ຽວຊານດ້ານເຕັກນິກດັ່ງກ່າວ ແມ່ນຈະໄດ້ຮັບຜິດຊອບໃນການສະເໜີວິທີການໃນການວິໃຈປັນຫາ, ປະຕິບັດໃຫ້ສຳເລັດວຽກງານສຶກສາຄົ້ນຄ້ວາ ໂດຍການປະສານງານຢ່າງໃກ້ຊິດຕິດແທດກັບຜູ້ປະກອບການທີ່ກ່ຽວຂ້ອງຕ່າງໆໃນຂະແໜງການ ທີ່ເປັນຜູ້ຕາງໜ້າໃນ ຄະນະເຮັດວຽກ GTC (ໃນບາງໂອກາດ ອາດຈະມີການນຳໃຊ້ວິສະວະກອນທ້ອງຖິ່ນ ເພື່ອດຳເນີນການສຳຫລວດ) ແລະ ຮ່ວມຈັດກອງປະຊຸມລະ ດັບຊາດວ່າດ້ວຍການສະຫລຸບສັງລວມບັນດາວຽກງານຕ່າງໆ.

## 5. ຕາຕະລາງປະຕິບັດງານ

ຕາຕະລາງປະຕິບັດງານແມ່ນມີດັ່ງຕໍ່ໄປນີ້ :

| | |
|---|---|
| ມິຖຸນາ 2006 | - ປຶກສາຫາລືກ່ຽວກັບບາດກ້າວການປະຕິບັດງານ ໂດຍຜູ້ທີ່ໄດ້ຮັບການແຕ່ງຕັ້ງທີ່ກ່ຽວຂ້ອງ (ໂດຍອີງໃສ່ບັນທຶກກອບການປະຕິບັດງານນີ້)<br>- ແຕ່ງຕັ້ງສະມາຊິກຂອງຄະນະເຮັດວຽກກາເຟຊົ່ວຄາວ GTC |
| ກໍລະກົດ | - ຈັດຕັ້ງຄະນະເຮັດວຽກກາເຟ GTC ຢ່າງເປັນທາງການ, ກອງປະຊຸມວາລະທຳອິດ<br>- ແຕ່ງຕັ້ງຄະນະກຳມະການ ຈຳນວນ 2 ຊຸດ<br>- ສະເໜີກຸ່ມຊ່ຽວຊານດ້ານວິຊາການ ສຳລັບວິໃຈປັນຫາໃນຂະແໜງກາເຟ |
| ກັນຍາ | - ກອງປະຊຸມວາລະທີ 2 ຂອງຄະນະເຮັດວຽກ GTC<br>- ສະເໜີວິທີການ ແລະ ຕາຕະລາງປະຕິບັດງານລະອຽດຂອງຄະນະກຳມະການຊຸດທີ 1 (ການສ້າງຕັ້ງຄະນະກຳມະການກາເຟແຫ່ງຊາດ CNCL)<br>- ສະເໜີວິທີການ ແລະ ຕາຕະລາງປະຕິບັດນງາລະອຽດຂອງຄະນະກຳມະການຊຸດທີ 2 (ການວິໃຈປັນໃນຂະແໜງກາເຟ) |
| ຕຸລາ | - ສຶກສາເນື້ອໃນເອກະສານຂອງຄະນະກຳມະການກາເຟ *Coffee Boards* ທີ່ມີຢູ່ໃນໂລກ<br>- ພາລະກິດໄລຍະສັ້ນ ຂອງຊ່ຽວຊານດ້ານການວິໃຈຂະແໜງກາເຟ<br>- ເລີ້ມຕົ້ນການສຳຫລວດ |
| ພະຈິກ | - ກອງປະຊຸມວາລະທີ 3 ຂອງຄະນະເຮັດວຽກ GTC<br>- ຕິດຕາມວຽກງານຂອງຄະນະກຳມະການທັງ 2 ຊຸດ<br>- ສືບຕໍ່ການສຶກສາ ສຳລັບຄະນະກຳມະການທັງ 2 ຊຸດ |
| ທັນວາ | - ກອງປະຊຸມວາລະທີ 4 ຂອງຄະນະເຮັດວຽກ GTC<br>- ຕິດຕາມວຽກງານຂອງຄະນະກຳມະການທັງ 2 ຊຸດ<br>- ຮ່າງເອກະສານບົດລາຍງານທຳອິດ ສຳລັບຄະນະກຳມະການທັງ 2 ຊຸດ<br>- ເດີນທາງສຶກສາວຽກງານ ຂອງຄະນະກຳມະການກາເຟ *Coffee Board* ທີ່ມີຢູ່ (ຕົວຢ່າງ : ປະເທດອິນເດຍ) |
| ມັງກອນ 2007 | - ກອງປະຊຸມວາລະທີ 5 ຂອງຄະນະເຮັດວຽກ GTC<br>- ສະເໜີເອກະສານບົດລາຍງານເຄິ່ງທາງໃນການປະຕິບັດງານ ໂດຍຄະນະກຳມະການທັງ 2 ຊຸດ<br>- ວິໃຈ, ປຶກສາຫາລື, ຕັດສິນແກ້ໄຂ ແລະ ການສຶກສ້າງປະກອບ<br>- ພາລະກິດຄັ້ງທີ 2 ຂອງຊ່ຽວຊານດ້ານການວິໃຈຂະແໜງກາເຟ |
| ກຸມພາ | - ສືບຕໍ່ການສຶກສາປະກອບ ສຳລັບຄະນະກຳມະການທັງ 2 ຊຸດ<br>- ເລີ້ມຕົ້ນການຮ່າງເອກະສານບົດລາຍງານສຸດທ້າຍ |
| ມີນາ | - ສືບຕໍ່ການຮ່າງເອກະສານບົດລາຍງານສຸດທ້າຍ<br>- ອ່ານຊ້ຳ, ກວດກາແກ້ໄຂ ໂດຍບັນດາຄະນະກຳມະການ<br>- ເລີ້ມຕົ້ນຈັດຕັ້ງກອງປະຊຸມລະດັບຊາດວ່າດ້ວຍການສະຫລຸບສັງລວມວຽກງານ ຂອງຄະນະກຳມະການທັງ 2 ຊຸດ |
| ເມສາ | - ກອງປະຊຸມວາລະທີ 6 ຂອງຄະນະເຮັດວຽກ GTC |

| | |
|---|---|
| | - ສະເໜີເອກະສານບົດລາຍງານສຸດທ້າຍ<br>- ຈັດຕັ້ງກອງປະຊຸມລະດັບຊາດວ່າດ້ວຍການສະຫລຸບສັງລວມວຽກງານ |
| ພຶດສະພາ 2007 | - ກອງປະຊຸມລະດັບຊາດວ່າດ້ວຍການສະຫລຸບສັງລວມວຽກງານ ຂອງຄະນະເຮັດວຽກກາເຟຊື່ວຄາວ GTC.<br>- ປະກາດລົບລ້າງຄະນະເຮັດວຽກກາເຟຊົ່ວຄາວ GTC. |

## 6. ງົບປະມານ

ງົບປະມານຕໍ່ໄປນີ້ແມ່ນການຄາດຄະເນ.

ໂຄງການພັດທະນາ ກະສິກໍາ ພູພຽງບໍລະເວນ PAB ຄໍານວນງົບປະມານໄວ້ຈໍານວນ 9 000 ໂດລາ ສໍາລັບກິດຈະກໍານີ້ ໃນປີ 2006 ແລະ ຈໍານວນ 7 000 ໂດລາສໍາລັບປີ 2007. ສະນັ້ນງົບປະມານນີ້ແມ່ນກວມເອົາຄ່າໃຊ້ຈ່າຍທຸກຢ່າງ ຍົກເວັ້ນຄ່າໃຊ້ຈ່າຍສໍາລັບພາລະກິດຂອງຊ່ຽວຊານ.

ສໍາລັບພາລະກິດສໍາລັບຊ່ຽວຊານທັງ 2 ພາລະກິດ ແມ່ນຕ້ອງໄດ້ຮັບການສະນັບສະໜູນດ້ານການເງິນ ໂດຍອີງໃສ່ສັນຍາ« ພາລະກິດຊ່ຽວຊານໄລຍະສັ້ນ » ລະຫວ່າງ ໂຄງການ PCADR ແລະ ບໍລິສັດ LCG.

ຄ່າໃຊ້ຈ່າຍສໍາລັບຊ່ຽວຊານດ້ານເຕັກນິກປະຈໍາໂຄງການ PAB ແລະ ປະຈໍາ UC ແມ່ນບໍ່ໄດ້ນັບເຂົ້າໃນງົບປະມານຫ້ອງນີ້. ຕາມທໍາມະດາແລ້ວ, ງົບປະມານຫ້ອງນີ້ແມ່ນໄດ້ຖືກກໍານົດໄວ້ໃນງົບປະມານ ຫ້ອງການປະຕິບັດງານຂອງໂຄງການ PAB ແລະ PCADR.

ການເດີນທາງສຶກສາວຽກ ກັບຄະນະກໍາມະການກາເຟ *Coffee Board* ທີ່ມີຢູ່ນັ້ນ ແມ່ນບໍ່ໄດ້ຖືກຄິດໄລ່ໃນງົບປະມານນີ້ເຊັ່ນດຽວກັນ. ສະນັ້ນ, ຖ້າຫາກວ່າການເດີນທາງດັ່ງກ່າວຫາກໄດ້ຮັບການພິດຈາລະນາເຫັນດີຈາກທາງຄະນະເຮັດວຽກ GTC, ແມ່ນຈະໄດ້ມີການຄິດໄລ່ງົບປະມານສໍາລັບກິດຈະກໍານີ້ເປັນກໍລະນີຕ່າງຫາກ.

**ງົບປະມານຂອງຄະນະເຮັດວຽກກາເຟ GTC**

| *ລາຍການ* | *ມູນຄ່າ US$* |
|---|---|
| ກອງປະຊຸມຂອງຄະນະເຮັດວຽກ GTC (6 ວາລະ : ຄ່າເດີນທາງ, per diem, etc.) | 5 400 |
| ຊ່ຽວຊານດ້ານເຕັກນິກ ນັກກົດໝາຍ, ຄະນະກໍາມະການຊຸດທີ 1 | 1 000 |
| ຊ່ຽວຊານດ້ານເຕັກນິກ, ຄະນະກໍາມະການຊຸດທີ 2 (ຄ່າເດີນທາງ, per diem, etc.) | 1 800 |
| ການສໍາຫລວດພາກສະໜາມ, ການສຶກສາວິໄຈບັນຫາຂະແໜງກາເຟ | 5 000 |
| ກອງປະຊຸມລະດັບຊາດວ່າດ້ວຍການສະຫລຸດສັງລວມຜົນຂອງການປະຕິບັດງານ | 5 000 |
| ພາລະກິດຂອງຊ່ຽວຊານ (2 ພາລະກິດ ຈໍານວນ 8 ວັນ) | 12 960 |
| ລວມ | **31 160** |

*ເນື້ອໃນຮຽບຮຽງ ໂດຍ : ຊ່ຽວຊຽນດ້ານເຕັກນິກປະຈໍາ ໂຄງການ ພັດທະນາກະສິກໍາ ພູພຽງບໍລະເວນ* ***(PAB)***

*ເອກະສານທີ* ***2***

*ມິຖຸນາ* ***2006***

*ແປເປັນພາສາລາວ ໂດຍ : ພຸດທະສິນ ພະໄຊຄໍາ*